ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1633 /ອຄ.ກຂອ
ນະຄອນຫຼວງວຽງຈັນ, ວັນທີ 23 ພະຈິກ 2018

# ຂໍ້ຕົກລົງ

## ວ່າດ້ວຍການປະກາດໃຊ້ລະບຽບແຫຼ່ງກຳເນີດສະເພາະທີ່ນຳໃຊ້ກັບແຕ່ລະຜະລິດຕະພັນ ພາຍໃຕ້ຂອບສັນຍາການຄ້າເສລີອາຊຽນ - ອົດສະຕາລີ - ນິວຊີແລນ ທີ່ໂອນຖ່າຍຈາກ ລະບົບລະຫັດອັດຕາພາສີເອກະພາບອາຊຽນສະບັບ AHTN 2012 ມາເປັນ AHTN 2017

- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017;
- ອີງໃສ່ກອງປະຊຸມກອງປະຊຸມຂອງໜ່ວຍງານລະບຽບແຫຼ່ງກຳເນີດສິນຄ້າ ພາຍໃຕ້ຂອບສັນຍາການຄ້າເສລີ ອາຊຽນ-ອົດສະຕາລີ-ນິວຊີແລນ ຄັ້ງທີ 13 ລະຫວ່າງວັນທີ 04-07 ເມສາ 2018 ທີ່ນະຄອນ ດາໜັງ, ສສ ຫວຽດນາມ ທີ່ ໄດ້ສຳເລັດການປັບປຸງລະບຽບສະເພາະທີ່ນຳໃຊ້ກັບແຕ່ລະຜະລິດຕະພັນ;
- ອີງຕາມການສະເໜີຂອງ ກົມການນຳເຂົ້າ ແລະ ສົ່ງອອກ.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

**ມາດຕາ 1.** ປະກາດໃຊ້ລະບຽບແຫຼ່ງກຳເນີດສະເພາະທີ່ນຳໃຊ້ກັບແຕ່ລະຜະລິດຕະພັນ (Product Specific Rules: PSR) ພາຍໃຕ້ຂອບສັນຍາການຄ້າເສລີ ອາຊຽນ - ອົດສະຕາລີ - ນິວຊີແລນ ທີ່ໂອນຖ່າຍຈາກລະບົບລະຫັດອັດຕາພາສີເອກະພາບອາຊຽນສະບັບ AHTN 2012 ມາເປັນ AHTN 2017.

**ມາດຕາ 2.** ມອບໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ ຮັບຜິດຊອບແນະນຳ ແລະ ເຜີຍແຜ່ ວິທີຈັດຕັ້ງປະຕິບັດລະອຽດກ່ຽວກັບ ລະບຽບການດັ່ງກ່າວ ເພື່ອໃຫ້ຂໍ້ຕົກລົງສະບັບນີ້ຖືກປະຕິບັດຢ່າງໄດ້ຮັບຜົນດີ.

**ມາດຕາ 3.** ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ວັນທີ 01 ມັງກອນ 2019 ເປັນຕົ້ນໄປ.໑ -

ລັດຖະມົນຕີ

ບຸນມີ ມະນີວົງ